SOUKANYA and INTHALEUXAY. 2020. Souphanouvong Journal: Multi-disciplinary Research of Souphanouvong University: ISSN 2521-0653. Vol. 6, Issue 1: Page 55 - 66.

ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ

ສະບັບທີ 6, ເຫຼັ້ມທີ 1, ມັງກອນ -ມິຖຸນາ 2020, ເລກທະບຽນ ISSN 2521-0653

# ຄວາມຫຼາກຫຼາຍຂອງຊະນິດພັນສັດຢູ່ໃນປ່າສະຫງວນແຫ່ງຊາດນ້ຳຫ້າ ແລວເຊື່ອມຕໍ່ຕາມສາຍແດນລາວເຂດນ້ຳກິ່ງ - ເຂດປ່າສະຫງວນຊຸ້ງຍອງ ສປ ຈີນ[1]

**ກອງແກ້ວ ສຸກັນຍາ[2] ແລະ ສີຊົມພູ ອິນທະລືໄຊ[3]**

*ພາກວິຊາ ຊັບພະຍາກອນປ່າໄມ້ ຄະນະກະເສດສາດ ແລະ ມະຫາວິທະຍາໄລ ສຸພານຸວົງ*

**ບົດຄັດຫຍໍ້**

ການລົງສຶກສາສຳຫຼວດສັດປ່າ ຢູ່ໃນປ່າສະຫງວນແຫ່ງຊາດ ນ້ຳຫ້າ. ຕາມເຂດແລວເຊື່ອມຕໍ່ຂອງປ່າສະຫງວນເຂດນ້ຳກິ່ງ. ບ້ານນ້ຳກິ່ງ ເມືອງຫຼວງ ນ້ຳທາ ແຂວງ ຫຼວງນ້ຳທາເຊິ່ງໄດ້ສຶກສາເຖິງຈຳນວນຊະນິດພັນສັດ. ຄວາມໜາແໜ້ນ. ຄວາມຖີ່. ໂດຍການຕັ້ງກ້ອງຖ່າຍຮູບສຳຫຼວດສັດປ່າ. ເຊິ່ງເລີ່ມເກັບກຳຂໍ້ມູນແຕ່ ວັນທີ 18 ມັງກອນ 2016 ເຖິງ 01 ພຶດສະພາ 2016.

ຜົນຂອງການສຳຫຼວດສັດປ່າຄັ້ງນີ້ບັນທຶກພາບສັດປ່າທີ່ອາໃສໃນພື້ນທີ່ໄດ້ຈຳນວນ 12 ຊະນິດ: ທີ່ອາໃສຢູ່ໃນເຂດນີ້ນັບຈຳນວນລວມໄດ້ 233 ໂຕ. ເຊັ່ນ: ລີງ ຈຳນວນ 48 ໂຕ; ນົກກະຈິກ ຈຳນວນ 34 ໂຕ; ເຫງັນ ຈຳນວນ 34 ໂຕ; ໝູປ່າ ຈຳນວນ 29 ໂຕ. ກວາງ ຈຳນວນ 19 ໂຕ; ຟານ ຈຳນວນ 19 ໂຕ; ໝາໃນ ຈຳນວນ 16 ໂຕ; ເໝັ້ນ ຈຳນວນ 14 ໂຕ; ໄກ່ຂວາ ຈຳນວນ 12 ໂຕ; ຫອນ ຈຳນວນ 6 ໂຕ; ກະຮອກ ຈຳນວນ 1 ໂຕ; ໝີ ຈຳນວນ 1 ໂຕ. ຄວາມໜາແໜ້ນຂອງການນຳໃຊ້ພື້ນທີ່: ລີງ = 0.222 ໂຕ/ຕາແມັດ; ເຫງັນ = 0.157 ໂຕ/ຕາແມັດ; ນົກກະຈິກ = 0.157 ໂຕ/ຕາແມັດ; ໝູປ່າ = 0.134 ໂຕ/ຕາແມັດ; ກວາງ = 0.087 ໂຕ/ຕາແມັດ; ຟານ = 0.087 ໂຕ/ຕາແມັດ; ໝາໃນ = 0.074 ໂຕ/ຕາແມັດ; ເໝັ້ນ = 0.064 ໂຕ/ຕາແມັດ; ໄກ່ຂວາ = 0.055 ໂຕ/ຕາແມັດ; ຫອນ = 0.027 ໂຕ/ຕາແມັດ; ກະຮອກ = 0.004 ໂຕ/ຕາແມັດ; ໝີ = 0.004 ໂຕ/ຕາແມັດ. ຄວາມຖີ່ຂອງການເຫັນສັດແຕ່ລະຊະນິດ: ລີງ = 20.6 ສ່ວນຮ້ອຍ; ເຫງັນ = 14.59 ສ່ວນຮ້ອຍ; ນົກ = 14.59 ສ່ວນຮ້ອຍ; ໝູປ່າ = 12.44 ສ່ວນຮ້ອຍ; ກວາງ = 8.15 ສ່ວນຮ້ອຍ; ຟານ = 8.15 ສ່ວນຮ້ອຍ; ໝາໃນ = 6.86 ສ່ວນຮ້ອຍ; ເໝັ້ນ = 0.06 ສ່ວນຮ້ອຍ; ໄກ່ຂວາ = 5.15 ສ່ວນຮ້ອຍ; ຫອນ = 2.57 ສ່ວນຮ້ອຍ; ກະຮອກ = 0.42 ສ່ວນຮ້ອຍ; ໝີ = 0.42 ສ່ວນຮ້ອຍ.

**ຄຳສຳຄັນ:** ຄວາມຫຼາກຫຼາຍ, ຊະນິດພັນສັດ, ປ່າສະຫງວນແຫ່ງຊາດ, ເຂດເຊື່ອມຕໍ່

[1] ***ການອ້າງອີງພາສາລາວ:*** ກອງແກ້ວ ສຸກັນຍາ ແລະ ສີຊົມພູ ອິນທະລືໄຊ. (2020). **ຊື່ຄວາມຫຼາກຫຼາຍຂອງຊະນິດພັນສັດຢູ່ໃນປ່າສະຫງວນແຫ່ງຊາດນ້ຳຫ້າແລວເຊື່ອມຕໍ່ຕາມສາຍແດນລາວເຂດນ້ຳກິ່ງ - ເຂດປ່າສະຫງວນຊຸ້ງຍອງ ສປ ຈີນ**, *ວາລະສານວິທະຍາສາດມະຫາວິທະຍາໄລ ສຸພານຸວົງ, ເລກທະບຽນ ISSN 2521-0653, ສະບັບທີ: 6, ເຫຼັ້ມທີ 1, ໜ້າທີ: 55 - 66.*

***ຊື່ຜູ້ຕິດຕໍ່ພົວພັນ:***

[2] *ກອງແກ້ວ ສຸກັນຍາ, ພາກວິຊາ ຊັບພະຍາກອນປ່າໄມ້, ອີເມວ: Kongkeosoukanya 63@gmail.com*

[3] *ຊື່ຜູ້ທີ ສີຊົມພູ ອິນທະລືໄຊ, ພາກວິຊາ ຊັບພະຍາກອນປ່າໄມ້, ອີເມວ: somphou3030@yahoo.com*

SOUKANYA and INTHALEUXAY. 2020. Souphanouvong Journal: Multi-disciplinary Research of Souphanouvong University: ISSN 2521-0653. Vol. 6, Issue 1: Page 55 - 66.

# The Multi of Wildlife in The Nam Ha National Protected Area in The Border Between Nam Kong River and Sung Yong Park in China

**KongKeo SOUKANYA [4] and Sysomphou INTHALEUXAY [5]**

*Department of Forest Resource, Faculty of Agriculture and Forest Resource*

**Abstract**

This survey was carried out to study amount and density of wild animals by using the camera digital to recording their behavior at Namha national protected area in the Namtha province. The results recorded by photography that there were 12 types and had included 233 heads of wild animals such as 48 heads of monkey; birds =34; tinnitus = 34; tiffany = 19; wild pigs = 29; deer = 19; dogs = 16; walls = 14; chickens= 12; Tons = 6; squirrel = 1 and bear = 1. The density of areas were included that monkey = 0.222head per $m^2$ (20.6%); birds = 0.157 (14.6%); tinnitus = 0.157; wild pigs = 0.134 (12.4%); deer = 0.087 (8.15%); tiffany = 0.087 (8.15%); dogs = 0.074 (6.86%); walls = 0.064 (0.06%); chickens = 0.055 (5.15%); Tons = 0.027 (2.57%); squirrels = 0.004 (0.42%) and bears = 0.004head per $m^2$ (0.42%) respectively.

***Keywords:*** Connection area; Multiple; Type of animal; National protected area

**Corresponding Author:**

[4] KongKeo SOUKANYA, FOREST RESOURCE, Email: *Kongkeosoukanya 63@gmail.com*

[5] Sysomphou INTHALEUXAY,) FOREST RESOURCE, Email: *somphou3030@yahoo.com*

## 1. ພາກສະເໜີ

ປະເທດລາວເຮົາເປັນປະເທດໜຶ່ງທີ່ປະກອບດ້ວຍຊີວະນາໆພັນ. ຢູ່ໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້. ໃນປັດຈຸບັນມີເນື້ອທີ່ປ່າໄມ້ປົກຫຸ້ມປະມານ 41.5 ສ່ວນຮ້ອຍ ຂອງເນື້ອທີ່ທົ່ວປະເທດ ແລະ ມັນໄດ້ລວມເອົາພື້ນທີ່ໆມີຄວາມສໍາຄັນທາງຄວາມຫຼາກຫຼາຍດ້ານທີ່ຢູ່ອາໃສໃຫ້ແກ່ບັນດາສັດປ່ານາໆຊະນິດເຊິ່ງບັນດາຊະນິດພັນແລະ ຈໍານນວນປະຊາກອນສັດປ່າຂອງປະເທດເຮົາແມ່ນມີຄວາມສໍາຄັນໃນລະດັບຂົງເຂດ ແລະ ໃນລະດັບໂລກ.

ເພື່ອເປັນການປົກປັກຮັກສາຊັບພະຍາກອນຊີວະນາໆພັນ. ລັດຖະບານລາວໄດ້ປະກາດປ່າສະ ຫງວນແຫ່ງຊາດຂຶ້ນໃນແຕ່ລະຂົງເຂດໃນທົ່ວປະເທດ. ເຊິ່ງໃນນີ້ປ່າສະຫງວນແຫ່ງຊາດ ນໍ້າຫ້າ ທີ່ ແຂວງຫຼວງນໍ້າທາກໍ່ແມ່ນປ່າສະຫງວນແຫ່ງຊາດອີກແຫ່ງໜຶ່ງຂອງປະເທດລາວທີໄດ້ປະກອບສ່ວນສໍາຄັນເຂົ້າໃນວຽກງານເສດຖະກິດ. ຮັກສາລະບົບນິເວດວິທະຍາ. ເປັນຖິ່ນອາໃສຂອງສັດປ່າພ້ອມທັງເປັນການສະໜອງພື້ນຖານໃຫ້ແກ່ວຽກງານອຸດສາຫະກໍາການທ່ອງທ່ຽວ. (ສົມປອງ ປຣິຊາ. 2009. ປຶ້ມຄູ່ມື ຄຸ້ມຄອງສັດປ່າ. ສໍາລັບການຮຽນ. ການສອນຫຼັກສູດປະລິນຍາຕີ ຄະ ນະວິທະຍາສາດປ່າໄມ້ ມະຫາວິທະຍາໄລ ແຫ່ງຊາດ).

ສະນັ້ນ, ໃນການພັດທະນາດ້ານຕ່າງໆໂດຍສະເພາະການພັດທະນາທີ່ເຮັດໃຫ້ເກີດການຈໍາກັດຂອງພື້ນທີປ່າໄມ້ກໍ່ຄືຖິ່ນທີ່ຢູ່ອາໃສຂອງສັດປ່າຖືກຈໍາກັດທີ່ເກີດຈາກການທໍາລາຍປ່າໄມ້ໄດ້ເຮັດໃຫ້ສັດປ່າທີ່ເຄີຍມີທີ່ຫາກິນຖືກຈໍາກັດລົງ ແລະ ເຮັດໃຫ້ມີຜົນກະທົບຕໍ່ການມີຊີວິດຫຼອດເພື່ອການສືບພັນຂອງສັດປ່າດັ່ງນັ້ນຈຶ່ງເປັນເຫດໃຫ້ສັດປ່າບາງຊະນິດພັນເກີດການອົບພະຍົບ ແລະ ບາງຊະນິດກໍ່ລົ້ມຕາຍ. ດ້ວຍເຫດນີ້ ລັດຖະບານລາວຈຶ່ງໄດ້ມີການສໍາຫຼວດສັດປ່າທີ່ຫາຍາກ ແລະໃກ້ຈະສູນພັນ ເພື່ອຈັດສັນ. ຄຸ້ມຄອງ ແລະ ອະນຸລັກຮັກສາສັດປ່າເລົ່ານີ້ໃຫ້ມີການແຜ່ຂະຫຍາຍຈໍານວນປະຊາກອນເພີ່ມຂຶ້ນເພື່ອບໍ່ໃຫ້ສັດປ່າເກີດການສູນພັນ. (ສະພາແຫ່ງຊາດ. 2007. ກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ. ເລກທີ 07/ສພຊ. ນະຄອນຫຼວງວຽງຈັນ 24 ທັນວາ ).

ປ່າສະຫງວນແຫ່ງຊາດນໍ້າຫ້າມີເນື້ອທີ່ 222.400 ເຮັກຕາ ເນື່ອງຈາກມີຖິ່ນອາໄສກວ້າງຂວາງ ເຊັ່ນນີ້ຈຶ່ງເປັນບ່ອນຕອບສະໜອງແຫຼ່ງຊີວະນາໆພັນທີ່ມີຄວາມສໍາຄັນລະດັບຊາດ; ມີສັດລ້ຽງລູກດ້ວຍນໍ້ານົມຢ່າງໜ້ອຍ 38 ຊະນິດ ໃນນັ້ນມີສັດຂະໜາດໃຫຍ່ທີ່ເກີດໃນເຂດດັ່ງກ່າວມີ 22 ຊະນິດ ທີ່ມີຄວາມສໍາຄັນຕໍ່ການອະນຸລັກ; ນົກມີ 288 ຊະນິດທີ່ພົບເຫັນໃນການສໍາຫຼວດ ແລະ ການລາຍງານຂອງຊາວບ້ານ ໃນນັ້ນຢ່າງໜ້ອຍມີ 18 ຊະນິດ ທີ່ມີຄວາມສໍາຄັນຕໍ່ການອະນຸລັກ. (ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ ແຂວງ ຫຼວງນໍ້າທາ).

ເພື່ອການສຶກສາກໍ່ຄືການຂຽນບົດວິທະຍານິພົນ ແລະ ເພື່ອຍາກຮຽນຮູ້ກ່ຽວກັບການສໍາຫຼວດສັດປ່າ. ພ້ອມທັງເປັນການຖອດຖອນເອົາປະສົບການຄວາມຮູ້ ອັນເປັນໂອກາດດີເທື່ອນີ້ໄວ້ເປັນຄັງແຫ່ງຄວາມຮູ້ຂອງຕົນເອງເພື່ອອານາຄົດຈະໄດ້ນໍາເອົາປະສົບການຄວາມຮູ້ຄັ້ງນີ້ໄປໝູນໃຊ້ໃຫ້ເກີດປະໂຫຍດຕໍ່ສັງຄົມ. ດັ່ງນັ້ນຈຶ່ງເກີດມີການສໍາຫຼວດຄວາມຫຼາກຫຼາຍຂອງຊະນິດພັນສັດຢູ່ໃນປ່າສະຫງວນແຫ່ງຊາດນໍ້າຫ້າ. ຕາມເຂດແລວເຊື່ອມຕໍ່ຕາມຊາຍແດນລາວເຂດນໍ້າກິ່ງ - ເຂດປ່າສະຫງວນຊຸ້ຍອງ ສ ປ ຈີນ.

## 2. ວິທີການຄົ້ນຄວ້າ

### 2.1 ສະຖານທີ່ການສຶກສາ

ພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງນໍ້າທາ. ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້. ຕັ້ງຢູ່ບ້ານ ນາຫ້ອມ ເມືອງ ຫຼວງນໍ້າທາ ແຂວງຫຼວງນໍ້າທາ. ຈຸດລົງສໍາຫຼວດສັດປ່າພາກສະໜາມແມ່ນເຂດປ່າຄຸ້ມຄອງບ້ານ ນໍ້າກິ່ງ. ເມືອງ ຫຼວງນໍ້າທາ ແຂວງຫຼວງນໍ້າທາ.

### 2.2 ອຸປະກອນ ແລະ ວິທີການສຶກສາ

- ແຜນທີ່
- ປຶ້ມບັນທຶກ/ບິກ
- ກ້ອງສ່ອງທາງໄກ
- ກ້ອງຖ່າຍຮູບ
- ຈີພີເອຣັດ GPS

- ປື້ມແນະນຳ

➢ **ວິທີການສຶກສາ: ມີສອງພາກຄື**

**- ພາກຫ້ອງການ** : ເປັນການລວບລວມຂໍ້ມູນທີ່ມີຢູ່ແລ້ວທີ່ເຫັນວ່າມີຄວາມສຳຄັນ ແລະ ມີສ່ວນກ່ຽວຂ້ອງກໍຄື : ເອກະສານຕ່າງໆ. ບົດຄົ້ນຄວ້າ. ອິນເຕີເນັດ. ບົດໂຄງການຈົບຊັ້ນຂອງລຸ້ນອ້າຍທີ່ຜ່ານມາເພື່ອເປັນການເອົາມາປະກອບເຂົ້າໃນການຂຽນບົດວິທະຍານິພົນໃຫ້ສຳເລັດຜົນຕາມຈຸດປະສົງ

**-ການລົງເກັບເອົາຂໍ້ມູນໃນສະໜາມ** : ເປັນການລົງໄປພື້ນທີ່ນຳທີມງານເພື່ອໃຫ້ໄດ້ຂໍ້ມູນຈາກພາກສະໜາມຢ່າງແທ້ຈິງມາປະກອບເຂົ້າ ໃນການຂຽນບົດວິທະຍານິພົນໃຫ້ສຳເລັດຜົນຕາມຈຸດປະສົງ.

ອຸປະກອນທີ່ນໍາໃຊ້ໃນການສໍາຫຼວດເຊັ່ນ: ໂທລະສັບ. ແຜນທີ່. ເຂັມທິດ. ກ້ອງສ່ອງທາງໃກ. ກ້ອງຖ່າຍຮູບ. ຈີພີເອຣັດ GPS. ເຄື່ອງນຸ່ງທີ່ເໝາະສົມ. ເຕັ້ນ. ຖົງເປ້. ເສື້ອກັນຝົນ. ໄຟສາຍ. ປື້ມຄູ່ມືສັດປ່າ. ຕາໜ່າງຈັບເຈຍ. ຟອມບັນທຶກ. ປື້ມບັນທຶກ. ບິກ/ສໍ. ໄມ້ບັນທັດ. ໄມ້ແມັດວັດແທກ. ອຸປະກອນປະຖົມພະຍາບານ. ມີດ. ຜ້າ. ນ້ຳດື່ມ ແລະ ອາຫານຈຳນວນໜຶ່ງ.

**ວິທີການຕິດຕັ້ງກ້ອງ**

ນຳໃຊ້ກ້ອງ bushnell ຊອກຫາສະຖານທີ່ເປັນຕົ້ນແມ່ນເຂດສັດປ່າຜ່ານ. ເຂດປຸ່ງ ຫຼື ແຫຼ່ງທີ່ສັດລົງມາກິນເປັນບ່ອນທີ່ປາສະຈາກສະພາບອາກາດເຄື່ອນເໜັງ ເຊັ່ນ: ເຂດລົມພັດໃບໄມ້. ນ້ຳໄຫຼ ເພາະວ່າອາດເຮັດໃຫ້
ກ້ອງຖ່າຍຢູ່ຕະຫຼອດເວລາເມື່ອມີການເໜັງຕີງ.

**ໜ້າກ້ອງ**

1. Motion Sensor: ຈໍໜ້າຮັບການເຄື່ອນເໜັງທັງກາງຄືນ ແລະ ກາງເວັນ.
2. Camera Lens: ຈໍໜ້າກ້ອງຖ່າຍ.
3. Indicator: ໄຟສະແດງຜົນເມື່ອກ້ອງເລີ່ມເຮັດວຽກ.
4. Padlock hole: ຮູກະແຈ.
5. Tripod Socket: ຮູກ້ອງ. ຮູສາຍເຄໂບເພື່ອເຊື່ອມຫາຄອມພິວເຕີ.

**ຫຼັງກ້ອງ**

1. ກົດປຸ່ມ Up/ down: ເພື່ອເລື່ອນຕາມເມນູເຊິ່ງສະແດງຢູ່ຈໍສະແດງຜົນເມື່ອຕັ້ງຄ່າ. ເມື່ອເລືອກໄດ້ຕາມຄວາມຕ້ອງການແລ້ວກໍກົດປຸ່ມ OK.
2. ໃບໜ້າຈໍສະແດງວ່າ.
3. T- Lape: ແມ່ນການເລີ່ມຕົ້ນ ແລະ ຢຸດການເຮັດວຽກຂອງກ້ອງ.
4. Date: ແມ່ນການບົ່ງບອກການຕັ້ງຄ່າເວລາ. ວັນ. ເດືອນ. ປີ.
5. Time: ແມ່ນການບົ່ງບອກໂມງເວລາການຖ່າຍຮູບກ
6. Delay: ແມ່ນບອກໄລຍະຫ່າງຂອງການຖ່າຍ .
7. Mode: ການເລືອກໄລຍະ 6 m.
8. Format: ແມ່ນການລົບຮູບພາບທີ່ຢູ່ໃນແຜ່ນ ແລະ ກ້ອງພາຍຫຼັງທົດລອງ ແລະ ຕັ້ງຄ່າ.
9. ປຸ່ມ: Shutter: ປົກກະຕິແມ່ນ M ຖ້າຮູບບໍ່ແຈ້ງໃຫ້ເລືອກເອົາ S.
10. ປຸ່ມ: PIR: ເລືອກ H ໃນລະດູແລ້ງ. M ແມ່ນການຕັ້ງຄ່າປົກກະຕິ. ຫຼັງຈາກນັ້ນໃຫ້

ກວດເບິ່ງແລ້ວກົດປຸ່ມ OK.

**2.3 ວິເຄາະຜົນ**

**2.3.1 ການຄິດໄລ່ຫາຄວາມຖີ່**

- **ສົມມະການຂອງຄວາມຖີ່**

$$\text{ຄວາມຖີ່} = \frac{\text{ຈຳນວນຂອງສັດແຕ່ລະຊະນິດ}}{\text{ຈຳນວນສັດທັງໝົດ}} \times 100$$

; ຫົວໜ່ວຍ ( % ) ສ່ວນຮ້ອຍ.

$$\mathbf{F} = \frac{n}{N} \times \mathbf{100} \quad ;$$

F = ແມ່ນຄວາມຖີ່;

N = ແມ່ນຈຳນວນສັດທັງໝົດ;

n = ແມ່ນຈຳນວນສັດແຕ່ລະຊະນິດ

**2.3.2 ຄິດໄລ່ຫາຄວາມໜາແໜ້ນ.**

- **ສົມມະການຂອງຄວາມໜາແໜ້ນ**

$$\text{ຄວາມໜາແໜ້ນ} = \frac{\text{ຈຳນວນສັດ}}{\text{ເນື້ອທີ່}} \quad ;$$

ຫົວໜ່ວຍ ( ໂຕ/$Km^2$ ຫຼື ໂຕ/$m^2$ ຫຼື ໂຕ/ເຮັກຕາ ).

$D = \frac{N}{A}$ ;

$D$ = ແມ່ນຄວາມໜາແໜ້ນ;

$N$ = ແມ່ນຈຳນວນສັດ;

$A$ = ແມ່ນເນື້ອທີ່

- ເນື້ອທີ່ແລວເຊື່ອມຕໍ່ປ່າສະຫງວນນ້ຳຫ້າ ຂອງເຂດຄຸ້ມຄອງບ້ານ ນ້ຳກົ່ງແມ່ນ 3,850 ເຮັກຕາ. ເນື້ອທີ່ຂອງແຕ່ລະຈຸດສຳຫຼວດຕັ້ງກ້ອງແມ່ນ 6 ແມັດ ຄູນ 6 ແມັດຕາມບໍລິເວນປຸ່ງ ແລະ ຈຸດຕັ້ງກ້ອງ ເຊິ່ງ ກຳນົດເອົາ 36 ຕາແມັດ ຕາມການຕັ້ງຄ່າພາບຖ່າຍກ້ອງ. (ເນື້ອທີ່ລວມຂອງຈຸດສຳຫຼວດແມ່ນ 216 ຕາແມັດ ).

## 3. ຜົນໄດ້ຮັບ

ຢູ່ໃນປ່າສະຫງວນແຫ່ງຊາດ ນ້ຳຫ້າຕາມເຂດແລວເຊື່ອມຕໍ່ນ້ຳກົ່ງລຽບຕາມຊາຍແດນເຂດປ່າສະຫງວນ ຊົ່ງຍອງ ສ ປ ຈີນ. ຕາມການຕັ້ງກ້ອງສຳຫຼວດຈຳນວນ 6 ຈຸດໃນວັນທີ 22 ເດືອນ 10 ປີ 2015 ແລະ ໄດ້ເກັບກູ້ກ້ອງດັ່ງກ່າວສຳເລັດໃນວັນທີ 15 ເດືອນ 3 ປີ 2016. ສາມາດຕອບຜົນຂອງການສຶກສາໄດ້ຕາມຈຸດປະສົງດັ່ງລາຍລະອຽດລຸ່ມນີ້:

### 3.1 ຈຳນວນຊະນິດພັນສັດປ່າທີ່ສຳຫຼວດໄດ້ໃນປ່າສະຫງວນແຫ່ງຊາດ ນ້ຳຫ້າ ເຂດແລວເຊື່ອມຕໍ່ນ້ຳກົ່ງ

ກ້ອງສາມາດບັນທຶກພາບສັດປ່າທີ່ອາໃສໃນພື້ນທີ່ໄດ້ຈຳນວນ 12 ຊະນິດ. ທີ່ອາໃສຢູ່ໃນເຂດແລວເຊື່ອມຕໍ່ນ້ຳກົ່ງ ມີຈຳນວນທັງໝົດ 233 ໂຕ. ເຊິ່ງ ລິງ ຈຳນວນ 48 ໂຕ; ນົກກະຈິກ ຈຳນວນ 34 ໂຕ; ເຫງັນ ຈຳນວນ 34 ໂຕ; ໝູປ່າ ຈຳນວນ 29 ໂຕ. ກວາງ ຈຳນວນ 19 ໂຕ; ຟານ ຈຳນວນ 19 ໂຕ; ໝາໃນ ຈຳນວນ 16 ໂຕ; ເໝັ້ນ ຈຳນວນ 14 ໂຕ; ໄກ່ຂວາ ຈຳນວນ 12 ໂຕ; ຫອນ ຈຳນວນ 6 ໂຕ; ກະຮອກ ຈຳນວນ 1 ໂຕ; ໝີ ຈຳນວນ 1 ໂຕ. ດັ່ງສະແດງໃນຕາຕາລາງທີ 1.

ຈາກຕາຕາລາງທີ 1 ນີ້ເຫັນວ່າສັດປ່າໃນຈຳນວນ 12 ຊະນິດນີ້ປະກອບມີສັດ 3 ປະເພດບັນຊີ 1. ບັນຊີ 2 ແລະ ບັນຊີ 3 ທີ່ໄດ້ກຳນົດໃນດຳລັດຂອງນາຍົກລັດ ຖະມົນຕີສະບັບເລກທີ 81/ນຍ. ລົງວັນທີ 13 ສິງຫາ2008 ດັ່ງລາຍລະອຽດລຸ່ມນີ້:

ກ. ບັນຊີ 1 ສັດປ່າປະເພດສັດຫວງຫ້າມ

ຈາກການສຶກສາພົບວ່າມີສັດປ່າປະເພດຫວງຫ້າມໃນບັນຊີ 1 ມີ 6 ຊະນິດ. ລວມທັງໝົດຈຳນວນ 101 ໂຕ ຄື: ກວາງ ຈຳນວນ 19 ໂຕ. ຟານ ຈຳນວນ 19 ໂຕ. ໝາໃນ ຈຳນວນ 16 ໂຕ. ໝີ ຈຳນວນ 1 ໂຕ. ໄກ່ຂວາ ຈຳນວນ 12 ໂຕ. ເຫງັນ ຈຳນວນ 34 ໂຕ.

ຂ. ບັນຊີ 2 ສັດປ່າປະເພດຄຸ້ມຄອງ

ຈາກການສຶກສາພົບວ່າມີສັດປ່າປະເພດຄຸ້ມຄອງໃນບັນຊີ 2 ມີ 4 ຊະນິດ. ລວມທັງໝົດຈຳນວນ 69 ໂຕ ຄື: ລິງ ຈຳນວນ 48 ໂຕ. ເໝັ້ນ ຈຳນວນ 14 ໂຕ. ຫອນ ຈຳນວນ 6 ໂຕ. ກະຮອກ ຈຳນວນ 1 ໂຕ.

ຄ. ບັນຊີ 3 ສັດປ່າປະເພດທົ່ວໄປ

ຈາກການສຶກສາພົບວ່າມີສັດປ່າປະເພດທົ່ວໄປໃນບັນຊີ 3 ມີ 2 ຊະນິດ. ລວມທັງໝົດຈຳນວນ 63 ໂຕ ຄື: ໝູປ່າ ຈຳນວນ 29 ໂຕ. ນົກກະຈິກ ຈຳນວນ 34 ໂຕ.

- ໃນ 3 ປະເພດບັນຊີສັດປ່າ ແມ່ນສາມາດແຍກອອກເປັນປະເພດສັດໄດ້ອີກຄື: ປະເພດສັດລ້ຽງລູກດ້ວຍນ້ຳນົມ. ປະເພດສັດປີກ. ປະເພດສັດເລືອຄານ. ປະເພດສັດເຄິ່ງບົກ - ເຄິ່ງນ້ຳ ແລະ ແມງໄມ້.

### 3.2 ຄວາມໜາແໜ້ນຂອງສັດປ່າ ແຕ່ລະຊະນິດພັນທີ່ສຳຫຼວດໄດ້ໃນປ່າສະຫງວນແຫ່ງ ຊາດນ້ຳຫ້າ ເຂດແລວເຊື່ອມຕໍ່ນ້ຳກົ່ງ

ຈາກການສຶກສາຄວາມຫຼາກຫຼາຍຂອງສັດປ່າໃນປ່າສະຫງວນແຫ່ງຊາດນ້ຳຫ້າ ເຂດແລວເຊື່ອມຕໍ່ນ້ຳກົ່ງພົບວ່າມີສັດປ່າທັງໝົດ 12 ຊະນິດ. ໃນນີ້ພົບວ່າສັດປ່າທີ່ພົບເຫັນຈຳນວນຫຼາຍກວ່າໝູ່ແມ່ນ: ລິງ ຈຳນວນ 48 ໂຕ. ຄວາມໜາແໜ້ນ 0.222 ໂຕ/ຕາແມັດ ແລະ ຮອງລົງມາແມ່ນ: ເຫງັນ ຈຳນວນ 34 ໂຕ ແລະ ນົກກະຈິກ ຈຳນວນ 34 ໂຕ. ຄວາມໜາແໜ້ນ 0.157 ໂຕ/ຕາແມັດ ແລະ ສັດປ່າທີ່ພົບເຫັນຈຳນວນໜ້ອຍກວ່າໝູ່ແມ່ນ: ກະຮອກ ຈຳນວນ 1 ໂຕ ແລະ ໝີ ຈຳນວນ 1 ໂຕ. ຄວາມໜາແໜ້ນ 0.004 ໂຕ/ຕາແມັດ. ດັ່ງຕາຕາລາງທີ 1

### 3.3 ຄວາມໜາແໜ້ນຂອງສັດປ່າປະເພດສັດຫວງຫ້າມ ຫຼື ບັນຊີ 1

ຈາກການສຶກສາພົບວ່າມີສັດປ່າປະເພດຫວງຫ້າມ 6 ຊະນິດຄື: ກວາງ. ຟານ. ໝາໃນ. ໝີ. ໄກ່ຂວາ.

ເຫງັ້ນ. ການສຶກສາຄວາມໜາແໜ້ນຂອງສັດປະເພດຫວງຫ້າມແມ່ນມີຄວາມໜາແໜ້ນລວມ 0.467 ໂຕ ຕໍ່ ຕາແມັດ. ແລະ ຄວາມໜາແໜ້ນຂອງຊະນິດສັດປ່າທີ່ມີຄວາມໜາແໜ້ນຫຼາຍກວ່າໝູ່ແມ່ນ ເຫງັ້ນ ມີຄວາມໜາແໜ້ນ 0.157 ໂຕ ຕໍ່ ຕາແມັດ. ຮອງລົງມາແມ່ນ ກວາງ ແລະ ຟານ ມີຄວາມໜາແໜ້ນ 0.087 ໂຕ ຕໍ່ ຕາແມັດ ແລະ ໜ້ອຍສຸດແມ່ນ ໝີ 0.004 ໂຕ ຕໍ່ ຕາແມັດ.

**3.4 ຄວາມໜາແໜ້ນຂອງສັດປ່າປະເພດຄຸ້ມຄອງ ຫຼື ບັນຊີ 2**

ຈາກການສຶກສາພົບວ່າມີສັດປ່າປະເພດຄຸ້ມຄອງ 4 ຊະນິດຄື: ລີງ. ເໜັ້ນ. ຫອນ. ກະຮອກ.ການສຶກສາຄວາມໜາແໜ້ນຂອງສັດປະເພດຄຸ້ມຄອງແມ່ນມີຄວາມໜາແໜ້ນລວມ 0.319 ໂຕ/ຕາແມັດ ແລະ ຄວາມໜາແໜ້ນຂອງຊະນິດສັດປ່າທີ່ມີຄວາມໜາແໜ້ນຫຼາຍກວ່າໝູ່ແມ່ນ ລີງ ມີຄວາມໜາແໜ້ນ 0.222 ໂຕ ຕໍ່ ຕາແມັດ. ຮອງລົງມາແມ່ນ ເໜັ້ນ ມີຄວາມໜາແໜ້ນ 0.064 ໂຕ ຕໍ່ ຕາແມັດ ແລະ ໜ້ອຍສຸດແມ່ນ ກະຮອກ 0.004 ໂຕ/ຕາແມັດ.

**3.5 ຄວາມໜາແໜ້ນຂອງສັດປ່າປະເພດທົ່ວໄປ ຫຼື ບັນຊີ 3**

ຈາກການສຶກສາພົບວ່າມີສັດປ່າປະເພດທົ່ວໄປ 2 ຊະນິດຄື: ນົກກະຈິກ ມີຄວາມໜາແໜ້ນ 0.154 ໂຕ/ຕາແມັດ ແລະ ໝູປ່າ ມີຄວາມໜາແໜ້ນ 0.134 ໂຕ/ຕາແມັດ. ການສຶກສາຄວາມໜາແໜ້ນຂອງສັດປະເພດທົ່ວໄປແມ່ນມີຄວາມໜາແໜ້ນລວມ 0.291 ໂຕ/ຕາແມັດ.

❖ ຈາກຕາຕາລາງຂ້າງເທິງນີ້ໃນ 3 ປະເພດບັນຊີສັດປ່າ ແມ່ນສາມາດແຍກອອກເປັນປະເພດສັດໄດ້ດັ່ງນີ້:

**3.6 ຄວາມໜາແໜ້ນປະເພດສັດລ້ຽງລູກດ້ວຍນ້ຳນົມ**

ການສຶກສາພົບວ່າປະເພດສັດລ້ຽງລູກດ້ວຍນ້ຳນົມ ຈຳນວນ 10 ຊະນິດຄື: ລີງ, ເຫງັ້ນ, ໝູປ່າ, ກວາງ ,ຟານ, ໝາໃນ, ເໜັ້ນ, ຫອນ, ກະຮອກ, ໝີ. ການສຶກສາຄວາມໜາແໜ້ນຂອງສັດປະເພດລ້ຽງລູກດ້ວຍນ້ຳນົມແມ່ນມີຄວາມໜາແໜ້ນລວມ 0.866 ໂຕ ຕໍ່ ຕາແມັດ. ແລະ ຄວາມໜາແໜ້ນຂອງຊະນິດສັດປ່າທີ່ມີຄວາມໜາ ແໜ້ນຫຼາຍກວ່າໝູ່ແມ່ນ ລີງ ມີຄວາມໜາແໜ້ນ 0.222 ໂຕ/ຕາແມັດ. ຮອງລົງມາແມ່ນ ເຫງັ້ນ ມີຄວາມໜາແໜ້ນ 0.157 ໂຕ/ຕາແມັດ ແລະ ໜ້ອຍສຸດແມ່ນ ກະຮອກ 0.004 ໂຕ/ຕາແມັດ.

**3.7 ຄວາມໜາແໜ້ນປະເພດສັດລ້ຽງລູກດ້ວຍນ້ຳນົມ ໃນບັນຊີ 1**

ການສຶກສາພົບວ່າປະເພດສັດລ້ຽງລູກດ້ວຍນ້ຳນົມໃນບັນຊີ 1 ແມ່ນມີຈຳນວນ 5 ຊະນິດຄື: ກວາງ, ຟານ, ໝາໃນ, ໝີ, ເຫງັ້ນ. ການສຶກສາຄວາມໜາແໜ້ນຂອງສັດປະເພດລ້ຽງລູກດ້ວຍນ້ຳນົມໃນບັນຊີ 1 ແມ່ນມີຄວາມໜາແໜ້ນລວມ 0.412 ໂຕ/ຕາແມັດ. ແລະ ຄວາມໜາແໜ້ນຫຼາຍກວ່າໝູ່ແມ່ນ ເຫງັ້ນ ມີຄວາມໜາແໜ້ນ 0.157 ໂຕ/ຕາແມັດ. ຮອງລົງມາແມ່ນ ກວາງ ແລະ ຟານ ມີຄວາມໜາແໜ້ນ 0.087 ໂຕ/ຕາແມັດ ແລະ ໜ້ອຍສຸດແມ່ນ ໝີ ມີຄວາມໜາແໜ້ນ 0.004 ໂຕ/ຕາແມັດ.

**3.8 ຄວາມໜາແໜ້ນປະເພດສັດລ້ຽງລູກດ້ວຍນ້ຳນົມ ໃນບັນຊີ 2**

ການສຶກສາພົບວ່າປະເພດສັດລ້ຽງລູກດ້ວຍນ້ຳນົມ ໃນບັນຊີ 2 ແມ່ນມີຈຳນວນ 4 ຊະນິດຄື: ລີງ, ເໜັ້ນ, ຫອນ, ກະຮອກ. ການສຶກສາຄວາມໜາແໜ້ນຂອງສັດປະເພດລ້ຽງລູກດ້ວຍນ້ຳນົມໃນບັນຊີ 2 ແມ່ນມີຄວາມໜາແໜ້ນລວມ 0.319 ໂຕ/ຕາແມັດ ແລະ ຄວາມໜາແໜ້ນຫຼາຍກວ່າໝູ່ແມ່ນລີງ ມີຄວາມໜາແໜ້ນ 0.222 ໂຕ/ຕາແມັດ. ຮອງລົງມາແມ່ນ ເໜັ້ນ ມີຄວາມໜາແໜ້ນ 0.064 ໂຕ/ຕາແມັດ ແລະ ໜ້ອຍສຸດແມ່ນກະຮອກ ມີຄວາມໜາແໜ້ນ 0.004 ໂຕ/ຕາແມັດ.

**3.9 ຄວາມໜາແໜ້ນປະເພດສັດລ້ຽງລູກດ້ວຍນ້ຳນົມ ໃນບັນຊີ 3**

ການສຶກສາພົບວ່າປະເພດສັດລ້ຽງລູກດ້ວຍນ້ຳນົມ ໃນບັນຊີ 3 ແມ່ນມີຈຳນວນ 1 ຊະນິດຄື: ໝູປ່າ. ການສຶກສາຄວາມໜາແໜ້ນຂອງສັດປະເພດລ້ຽງລູກດ້ວຍນ້ຳນົມໃນບັນຊີ 3 ແມ່ນມີຄວາມໜາແໜ້ນລວມ 0.134 ໂຕ/ຕາແມັດ.

**3.10 ຄວາມໜາແໜ້ນປະເພດສັດປີກ**

ການສຶກສາພົບວ່າປະເພດສັດປີກ ຈຳນວນ 2 ຊະນິດຄື: ໄກ່ຂວາ ແລະ ນົກກະຈິກ. ການສຶກສາ

ຄວາມໜາແໜ້ນຂອງສັດປະເພດສັດປີກແມ່ນມີຄວາມໜາແໜ້ນລວມ 0.212 ໂຕ ຕໍ່ ຕາແມັດ.

**3.11 ຄວາມໜາແໜ້ນປະເພດສັດປີກ ໃນບັນຊີ 1**

ການສຶກສາພົບວ່າປະເພດສັດປີກ ໃນບັນຊີ 1 ແມ່ນມີຈຳນວນ 1 ຊະນິດຄື: ໄກ່ຂວາ. ການສຶກສາຄວາມໜາແໜ້ນຂອງສັດປະເພດສັດປີກໃນບັນຊີ 1 ແມ່ນມີຄວາມໜາແໜ້ນ 0.055 ໂຕ/ຕາແມັດ.

**3.12 ຄວາມໜາແໜ້ນປະເພດສັດປີກ ໃນບັນຊີ 3**

ຈາກການສຶກສາພົບວ່າປະເພດສັດປີກ ໃນບັນຊີ 3 ແມ່ນມີຈຳນວນ 1 ຊະນິດຄື: ນົກກະຈິກ. ການສຶກສາຄວາມໜາແໜ້ນຂອງສັດປະເພດສັດປີກໃນບັນຊີ 3 ແມ່ນມີຄວາມໜາແໜ້ນ 0.157 ໂຕ/ຕາແມັດ.

**3.13 ຄວາມຖີ່ຂອງສັດປ່າແຕ່ລະຊະນິດພັນທີ່ສຳຫຼວດໄດ້ໃນປ່າສະຫງວນແຫ່ງຊາດ ນ້ຳຫ້າ ເຂດແລວເຊື່ອມຕໍ່ນ້ຳກິ່ງ**

ຈາກການສຶກສາຄວາມຫຼາກຫຼາຍຂອງສັດປ່າໃນປ່າສະຫງວນແຫ່ງຊາດນ້ຳຫ້າ ເຂດແລວເຊື່ອມຕໍ່ນ້ຳກິ່ງ ພົບວ່າມີສັດປ່າທັງໝົດ 12 ຊະນິດ. ໃນນີ້ພົບວ່າສັດປ່າທີ່ພົບເຫັນຈຳນວນຫຼາຍກວ່າໝູ່ແມ່ນ: ລິງ ຈຳນວນ 48 ໂຕ. ຄວາມຖີ່ຂອງການພົບເຫັນ ລິງ ແມ່ນ 20.6 ສ່ວນຮ້ອຍ ແລະ ຮອງລົງມາແມ່ນ: ເຫງັນ ຈຳນວນ 34 ໂຕ ແລະ ນົກກະຈິກ ຈຳນວນ 34 ໂຕ. ຄວາມຖີ່ຂອງການພົບເຫັນ ເຫງັນ ແລະ ນົກກະຈິກແມ່ນ 14.592 ສ່ວນຮ້ອຍ ແລະ ສັດປ່າທີ່ພົບເຫັນຈຳນວນໜ້ອຍກວ່າໝູ່ແມ່ນ: ກະຮອກ ຈຳນວນ 1 ໂຕ ແລະ ໝີ ຈຳນວນ 1 ໂຕ. ຄວາມຖີ່ຂອງການພົບເຫັນກະຮອກ ແລະ ໝີ ແມ່ນ 0.429 ສ່ວນຮ້ອຍ. ດັ່ງຕາຕາລາງທີ 3.

**3.15 ຄວາມຖີ່ຂອງສັດປ່າປະເພດສັດຫວງຫ້າມ ຫຼື ບັນຊີ 1**

ຈາກການສຶກສາພົບວ່າມີສັດປ່າປະເພດຫວງຫ້າມ 6 ຊະນິດຄື: ກວາງ. ຟານ. ໝາໃນ. ໝີ. ໄກ່ຂວາ. ເຫງັນ. ການສຶກສາຄວາມຖີ່ຂອງສັດປະເພດຫວງຫ້າມແມ່ນມີຄວາມຖີ່ລວມ 43.347 ສ່ວນຮ້ອຍ ແລະ ຄວາມຖີ່ຂອງຊະນິດສັດປ່າທີ່ມີຄວາມຖີ່ຫຼາຍກວ່າໝູ່ແມ່ນ ເຫງັນ ມີຄວາມຖີ່ 14.592 ສ່ວນຮ້ອຍ. ຮອງລົງມາແມ່ນ ກວາງ ແລະ ຟານ ມີຄວາມຖີ່ 8.154 ສ່ວນຮ້ອຍ ແລະ ໜ້ອຍສຸດແມ່ນ ໝີ 0.429 ສ່ວນຮ້ອຍ.

**3.16 ຄວາມຖີ່ຂອງສັດປ່າປະເພດຄຸ້ມຄອງ ຫຼື ບັນຊີ 2**

ຈາກການສຶກສາພົບວ່າມີສັດປ່າປະເພດຄຸ້ມຄອງ 4 ຊະນິດຄື: ລີງ, ເໝັ້ນ, ຫອນ, ກະຮອກ, ການສຶກສາຄວາມຖີ່ຂອງສັດປະເພດຄຸ້ມຄອງແມ່ນມີຄວາມຖີ່ລວມ 29.613 ສ່ວນຮ້ອຍ ແລະ ຄວາມຖີ່ຂອງຊະ ນິດສັດປ່າທີ່ຫຼາຍກວ່າໝູ່ແມ່ນ ລີງ ມີຄວາມຖີ່ 20.6 ສ່ວນຮ້ອຍ, ຮອງລົງມາແມ່ນ ເໝັ້ນ ມີຄວາມຖີ່ 14.592 ສ່ວນຮ້ອຍ ແລະ ໜ້ອຍສຸດແມ່ນ ກະຮອກ ມີຄວາມຖີ່ 0.429 ສ່ວນຮ້ອຍ.

**3.17 ຄວາມຖີ່ຂອງສັດປ່າປະເພດທົ່ວໄປ ຫຼື ບັນຊີ 3**

ຈາກການສຶກສາພົບວ່າມີສັດປ່າປະເພດທົ່ວໄປ 2 ຊະນິດຄື: ນົກກະຈິກ ແລະ ໝູປ່າ ການສຶກສາຄວາມຖີ່ຂອງສັດປະເພດທົ່ວແມ່ນມີຄວາມຖີ່ລວມ 27.038 ສ່ວນຮ້ອຍ ແລະ ຄວາມຖີ່ຂອງ ນົກກະຈິກ ມີຄວາມຖີ່ 14.592 ສ່ວນຮ້ອຍ ແລະ  ໝູປ່າ ມີຄວາມຖີ່ 12.446 ສ່ວນຮ້ອຍ.

- ❖ ຈາກຕາຕາລາງຂ້າງເທີງນີ້ໃນ 3 ປະເພດບັນຊີສັດປ່າ ແມ່ນສາມາດແຍກອອກເປັນປະເພດສັດໄດ້ດັ່ງນີ້:

**3.18 ຄວາມຖີ່ຂອງປະເພດສັດລ້ຽງລູກດ້ວຍນ້ຳນົມ**

ການສຶກສາພົບວ່າປະເພດສັດລ້ຽງລູກດ້ວຍນ້ຳນົມ ຈຳນວນ 10 ຊະນິດຄື: ລີງ, ເຫງັນ, ໝູປ່າ, ກວາງ, ຟານ, ໝາໃນ, ເໝັ້ນ, ຫອນ, ກະຮອກ, ໝີ. ການສຶກສາຄວາມຖີ່ຂອງສັດປະເພດລ້ຽງລູກດ້ວຍນ້ຳນົມແມ່ນມີຄວາມຖີ່ລວມ 80.257 ສ່ວນຮ້ອຍ ແລະ ຄວາມຖີ່ຂອງຊະນິດສັດປ່າທີ່ມີຄວາມຖີ່ຫຼາຍກວ່າໝູ່ແມ່ນ ລີງ ມີຄວາມຖີ່ 20.6 ສ່ວນຮ້ອຍ. ຮອງລົງມາແມ່ນ ເຫງັນ ມີຄວາມຖີ່ 14.592 ສ່ວນຮ້ອຍ ແລະ ໜ້ອຍສຸດແມ່ນ ກະຮອກ ມີຄວາມຖີ່ 0.429 ສ່ວນຮ້ອຍ.

**3.19 ຄວາມຖີ່ປະເພດສັດລ້ຽງລູກດ້ວຍນ້ຳນົມ ໃນບັນຊີ 1**

ການສຶກສາພົບວ່າປະເພດສັດລ້ຽງລູກດ້ວຍນ້ຳນົມ ໃນບັນຊີ 1 ແມ່ນມີຈຳນວນ 5 ຊະນິດຄື: ກວາງ, ຟານ, ໝາໃນ, ໝີ, ເຫງັນ. ການສຶກສາຄວາມຖີ່ຂອງ

ສັດປະເພດລ້ຽງລູກດ້ວຍນ້ຳນົມແມ່ນມີຄວາມຖີ່ລວມ 38.197 ສ່ວນຮ້ອຍ ແລະ ຄວາມຖີ່ຂອງຊະນິດສັດປ່າທີ່ມີຄວາມຖີ່ຫຼາຍກວ່າໝູ່ແມ່ນ ເຫງັ່ນ ມີຄວາມຖີ່ 14.592 ສ່ວນຮ້ອຍ. ຮອງລົງມາແມ່ນ ກວາງ ແລະ ຟານ ມີຄວາມຖີ່ 8.154 ສ່ວນຮ້ອຍ ແລະ ໜ້ອຍສຸດແມ່ນ ໝີ ມີຄວາມຖີ່ 0.429 ສ່ວນຮ້ອຍ.

**3.20 ຄວາມຖີ່ປະເພດສັດລ້ຽງລູກດ້ວຍນ້ຳນົມ ໃນບັນ ຊີ 2**

ການສຶກສາພົບວ່າປະເພດສັດລ້ຽງລູກດ້ວຍນ້ຳນົມ ໃນບັນຊີ 2 ແມ່ນມີຈຳນວນ 4 ຊະນິດຄື: ລີງ, ເໝັ້ນ, ຫອນ, ກະຮອກ. ການສຶກສາຄວາມຖີ່ຂອງສັດປະເພດລ້ຽງລູກດ້ວຍນ້ຳນົມແມ່ນມີຄວາມຖີ່ລວມ 29.613 ສ່ວນຮ້ອຍ ແລະ ຄວາມຖີ່ຂອງຊະນິດສັດປ່າທີ່ມີຄວາມຖີ່ຫຼາຍກວ່າໝູ່ແມ່ນ ລີງ ມີຄວາມຖີ່ 20.6 ສ່ວນຮ້ອຍ. ຮອງລົງມາແມ່ນ ເໝັ້ນ ມີຄວາມຖີ່ 6.008 ສ່ວນຮ້ອຍ ແລະ ໜ້ອຍສຸດແມ່ນ ກະຮອກ ມີຄວາມຖີ່ 0.429 ສ່ວນຮ້ອຍ.

**3.21 ຄວາມຖີ່ປະເພດສັດລ້ຽງລູກດ້ວຍນ້ຳນົມ ໃນບັນຊີ 3**

ການສຶກສາພົບວ່າປະເພດສັດລ້ຽງລູກດ້ວຍນ້ຳນົມ ໃນບັນຊີ 3 ແມ່ນມີຈຳນວນ 1 ຊະນິດຄື: ໝູປ່າ. ການສຶກສາຄວາມຖີ່ຂອງສັດແມ່ນມີຄວາມຖີ່ 12.446 ສ່ວນຮ້ອຍ.

**3.22 ຄວາມຖີ່ປະເພດສັດປີກ**

ການສຶກສາພົບວ່າປະເພດສັດປີກ ຈຳນວນ 2 ຊະນິດຄື: ໄກ່ຂວາ ແລະ ນົກກະຈິກ. ການສຶກສາຄວາມຖີ່ຂອງສັດປະເພດສັດປີກ ແມ່ນມີຄວາມຖີ່ລວມ 19.742 ສ່ວນຮ້ອຍ ແລະ ໄກ່ຂວາ ມີຄວາມຖີ່ 5.15 ສ່ວນຮ້ອຍ ແລະ ນົກກະຈິກ ມີຄວາມຖີ່ 14.592 ສ່ວນຮ້ອຍ.

**3.23 ຄວາມຖີ່ປະເພດສັດປີກ ໃນບັນຊີ 1**

ການສຶກສາພົບວ່າປະເພດສັດປີກ ໃນບັນຊີ 1 ແມ່ນມີຈຳນວນ 1 ຊະນິດຄື: ໄກ່ຂວາ. ການສຶກສາຄວາມຖີ່ຂອງສັດແມ່ນມີຄວາມຖີ່ 5.15 ສ່ວນຮ້ອຍ.

**3.24 ຄວາມຖີ່ປະເພດສັດປີກ ໃນບັນຊີ 3**

ຈາກການສຶກສາພົບວ່າປະເພດສັດປີກ ໃນບັນຊີ 3 ແມ່ນມີຈຳນວນ 1 ຊະນິດຄື: ນົກກະຈິກ. ການສຶກສາຄວາມຖີ່ຂອງສັດແມ່ນມີຄວາມຖີ່ 14.592ສ່ວນຮ້ອຍ.

**4. ວິພາກຜົນ**

ໃນການລົງສຶກສາການສຳຫຼວດສັດປ່າ ຢູ່ໃນປ່າສະຫງວນແຫ່ງຊາດ ນ້ຳຫ້າ. ຕາມເຂດແລວເຊື່ອມຕໍ່ຂອງປ່າສະຫງວນເຂດ ນ້ຳກິ່ງ. ບ້ານ ນ້ຳກິ່ງ ເມືອງຫຼວງນ້ຳທາ ແຂວງ ຫຼວງນ້ຳທາ ໂດຍສຶກສາຢູ່ໃນປ່າສະຫງວນແຫ່ງຊາດນ້ຳຫ້າຕາມເຂດແລວເຊື່ອມຕໍ່ນ້ຳກິ່ງລຽບຕາມສາຍແດນເຂດປ່າສະຫງວນຊ໊ຽຍອງ ສ ປ ຈີນ. ຕາມການຕັ້ງກ້ອງສຳຫຼວດຈຳນວນ 6 ຈຸດ ສາມາດບັນທຶກພາບສັດໄດ້ຈຳນວນ 12 ຊະນິດ: ທີ່ອາໃສຢູ່ໃນເຂດນີ້ຄື: ລີງ; ນົກກະຈິກ; ເຫງັ່ນ; ໝູປ່າ; ກວາງ;
ຟານ; ໝາໃນ; ເໝັ້ນ; ໄກ່ຂວາ; ຫອນ; ກະຮອກ; ໝີ.

ເນື່ອງຈາກເປັນການສຳຫຼວດດ້ວຍກ້ອງຖ່າຍຮູບພາບຄັ້ງທຳອິດ ຂອງຂ້າພະເຈົ້າ ແລະ ເປັນປະສົບການອັນໃໝ່ ທີ່ມີໂອກາດໄດ້ສຶກສາ ຫົວຂໍ້: ການສຳຫຼວດຄວາມຫຼາກຫຼາຍຂອງຊະນິດພັນສັດຢູ່ໃນປ່າສະຫງວນແຫ່ງຊາດນ້ຳຫ້າ. ແລວເຊື່ອມຕໍ່ຕາມຊາຍແດນລາວເຂດນ້ຳກິ່ງ - ເຂດປ່າສະຫງວນຊ໊ຽຍອງ ສປ ຈີນ.

ດ້ວຍເຫດຜົນໃນຫຼາຍດ້ານທີ່ກ່ຽວຂ້ອງກັບການເກີດການສຳຫຼວດສັດປ່າເທື່ອນີ້ເປັນຕົ້ນແມ່ນ: ການຂຽນບົດຈົບຊັ້ນ. ສະຖານທີ່. ໄລຍະເວລາ ແລະ ຊ່ວງຂອງການສຶກສາໃນພາກສະໜາມ ແລະ ຮູບແບບ. ວິທີການ. ຈຸດປະສົງຂອງການສຶກສາອີກດ້ວຍ.

- ຈາກການເກັບຂໍ້ມູນຄັ້ງນີ້ທ່ຽບໃສ່ຂໍ້ມູນສັດປ່າໃນປ່າສະຫງວນແຫ່ງຊາດນ້ຳຫ້າ ເຫັນວ່າເຄີຍມີຜູ້ບັນທຶກຊະນິດສັດໄວ້ແລ້ວ.

- ທ່ຽບໃສ່ປຶ້ມຄູ່ມືສັດໃນລາວ ຜົນການສຶກສາໄດ້ຊີ້ແຈງໃຫ້ເຫັນວ່າແມ່ນມີການບັນທຶກຂໍ້ມູນຊະນິດສັດປ່າໄວ້ແລ້ວ.

ດັ່ງນັ້ນ, ຈາກການຍ່າງເດີນປ່າໃນການເກັບຂໍ້ມູນຄັ້ງນີ້ ແລະ ຈາກຂໍ້ມູນສັດປ່າໃນປ່າສະຫງວນແຫ່ງຊາດນ້ຳຫ້າ ທີເຄີບມີຜູ້ບັນທຶກ ແລະ ຈາກປຶ້ມຄູ່ມືສັດໃນລາວ ແລ້ວແມ່ນຜົນທີ່ໄດ້ຮັບໃນການສຶກສາທີ່ອອກມາໄດ້ຊີ້ແຈງໃຫ້ເຫັນວ່າສັດປ່າທີ່ພົບເຫັນຈາກການສຳຫຼວດເທື່ອນີ້ແມ່ນມີການບັນທຶກຂໍ້ມູນສັດປ່າໃນປ່າ

ສະຫງວນແຫ່ງຊາດນ້ຳຫ້າ ແລະ ປື້ມຄູ່ມືສັດໃນລາວໄວ້ແລ້ວ.

## 5. ສະຫຼຸບຜົນ

### 5.1 ສະຫຼຸບ

ຈາກຜົນຂອງການສຶກສາ ການສຳຫຼວດຄວາມຫຼາກຫຼາຍຂອງຊະນິດພັນສັດຢູ່ໃນປ່າສະຫງວນແຫ່ງຊາດນ້ຳຫ້າ ( ແລວເຊື່ອມຕໍ່ຕາມຊາຍແດນລາວເຂດນ້ຳກິ່ງ - ເຂດປ່າສະຫງວນຊ້ຽຍອງ ສປ ຈີນ ). ຈຸດສຳຫຼວດເຂດປ່າຄຸ້ມຄອງບ້ານ ນ້ຳກິ່ງ, ເມືອງ ຫຼວງນ້ຳທາ, ແຂວງ ຫຼວງນ້ຳທາ. ອີງຕາມຈຸດປະສົງຂອງການສຶກສາແມ່ນສາມາດສະຫຼຸບຜົນຂອງການສໍຫຼວດຄັ້ງນີ້, ສັດປ່າທີ່ພົບເຫັນຈຳນວນຫຼາຍກວ່າໝູ່ແມ່ນ: ລີງ ຈຳນວນ 48 ໂຕ, ຄວາມໜາແໜ້ນ 0.222 ໂຕ ຕໍ່ ຕາແມັດ ແລະ ຄວາມຖີ່ຂອງການພົບເຫັນ ລີງ ແມ່ນ 20.6 ສ່ວນຮ້ອຍ ແລະ ຮອງລົງມາແມ່ນ: ເຫງັນ ຈຳນວນ 34 ໂຕ ແລະ ນົກກະຈິກ ຈຳນວນ 34 ໂຕ, ຄວາມໜາແໜ້ນ 0.157 ໂຕ ຕໍ່ ຕາແມັດ ແລະ ຄວາມຖີ່ຂອງການພົບເຫັນ ເຫງັນ ແລະ ນົກກະຈິກ ແມ່ນ 14.592 ສ່ວນຮ້ອຍ. ແລະ ສັດປ່າທີ່ພົບເຫັນຈຳນວນໜ້ອຍກວ່າໝູ່ແມ່ນ: ກະຮອກ ຈຳນວນ 1 ໂຕ ແລະ ໝີ ຈຳນວນ 1 ໂຕ, ຄວາມໜາແໜ້ນ 0.004 ໂຕ ຕໍ່ ຕາແມັດ ແລະ ຄວາມຖີ່ຂອງການພົບເຫັນ ກະຮອກ ແລະ ໝີ ແມ່ນ 0.429 ສ່ວນຮ້ອຍ. ດັ່ງລາຍລະອຽດລຸ່ມນີ້:

ຈາກຜົນການສຶກສາ ແມ່ນໄດ້ສັດປ່າຈຳນວນ 12ຊະນິດພັນ ທີ່ອາໃສຢູ່ໃນເຂດແລວເຊື່ອມຕໍ່ນ້ຳກິ່ງ, ຈຳນວນສັດທັງໝົດ 233 ໂຕ ເຊິ່ງ ລີງ ຈຳນວນ 48 ໂຕ,ນົກກະຈິກ ຈຳນວນ 34 ໂຕ, ເຫງັນ ຈຳນວນ 34 ໂຕ,ໝູປ່າ ຈຳນວນ 29 ໂຕ, ກວາງ ຈຳນວນ 19 ໂຕ, ຟານ ຈຳນວນ 19 ໂຕ, ໝາໃນ ຈຳນວນ 16 ໂຕ, ເໝັ້ນ ຈຳນວນ 14 ໂຕ, ໄກ່ຂວາ ຈຳນວນ 12 ໂຕ, ຫອນ ຈຳນວນ 6 ໂຕ, ກະຮອກ ຈຳນວນ 1 ໂຕ, ໝີ ຈຳນວນ 1ໂຕ.

ຈາກຜົນການສຶກສາຄວາມໜາແໜ້ນຂອງສັດປ່າໃນການສຳຫຼວດຄວາມຫຼາກຫຼາຍຂອງສັດປ່າໃນແລວເຊື່ອມຕໍ່ນ້ຳກິ່ງແມ່ນສະຫຼຸບຄວາມໜາແໜ້ນຂອງສັດປ່າແຕ່ລະຊະນິດພັນໄດ້ດັ່ງນີ້: ລີງ = 0.222 ໂຕ/ຕາແມັດ, ເຫງັນ = 0.157 ໂຕ/ຕາແມັດ, ນົກກະຈິກ = 0.157 ໂຕ/ຕາແມັດ, ໝູປ່າ = 0.134 ໂຕ/ແມັດ, ກວາງ = 0.087 ໂຕ/ຕາແມັດ, ຟານ = 0.087 ໂຕ/ຕາແມັດ, ໝາໃນ = 0.074 ໂຕ/ຕາແມັດ, ເໝັ້ນ = 0.064 ໂຕ ຕໍ່ ຕາແມັດ, ໄກ່ຂວາ = 0.055 ໂຕ/ຕາແມັດ, ຫອນ = 0.027 ໂຕ/ຕາແມັດ, ກະຮອກ = 0.004 ໂຕ/ຕາແມັດ, ໝີ = 0.004 ໂຕ/ຕາແມັດ.

ຈາກຜົນການສຶກສາຄວາມຖີ່ຂອງສັດປ່າໃນການສຳຫຼວດຄວາມຫຼາກຫຼາຍຂອງສັດປ່າໃນແລວເຊື່ອມຕໍ່ນ້ຳກິ່ງແມ່ນສະຫຼຸບຄວາມຖີ່ຂອງສັດປ່າແຕ່ລະຊະນິດພັນໄດ້ດັ່ງນີ້: ລີງ = 20.6 ສ່ວນຮ້ອຍ, ເຫງັນ = 14.59 ສ່ວນຮ້ອຍ, ນົກ = 14.59 ສ່ວນຮ້ອຍ, ໝູປ່າ =12.44 ສ່ວນຮ້ອຍ, ກວາງ = 8.15 ສ່ວນຮ້ອຍ, ຟານ = 8.15 ສ່ວນຮ້ອຍ, ໝາໃນ = 6.86 ສ່ວນຮ້ອຍ, ເໝັ້ນ = 0.006 ສ່ວນຮ້ອຍ, ໄກ່ຂວາ = 5.15 ສ່ວນຮ້ອຍ, ຫອນ = 2.57 ສ່ວນຮ້ອຍ, ກະຮອກ = 0.42 ສ່ວນຮ້ອຍ, ໝີ = 0.42 ສ່ວນຮ້ອຍ.

### 5.2 ສະເໜີແນະ

ໃນການສຶກສາ ການສຳຫຼວດຄວາມຫຼາກຫຼາຍຂອງຊະນິດພັນສັດຢູ່ໃນປ່າສະຫງວນແຫ່ງຊາດ ນ້ຳຫ້າ (ແລວເຊື່ອມຕໍ່ຕາມຊາຍແດນລາວເຂດ ນ້ຳກິ່ງ - ເຂດປ່າສະຫງວນ ຊ້ຽຍອງ ສປ ຈີນ). ຈຸດສຳຫຼວດເຂດປ່າຄຸ້ມຄອງບ້ານ ນ້ຳກິ່ງ. ເມືອງ ຫຼວງນ້ຳທາ. ແຂວງ ຫຼວງນ້ຳທາ. ເປັນການສຶກສາທີ່ໃໝ່ຂອງພາກວິຊາຊັບພະຍາກອນປ່າໄມ້ ກໍ່ຄືຂອງ ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້. ຂ້າພະເຈົ້າໄດ້ສຶກສາ ແລະ ໄດ້ຖອດທອນຮຽນຮູ້ປະສົບການອັນໃໝ່ໃນການສຶກສາຄັ້ງນີ້ຈົນປະສົບຜົນສຳເລັດຕາມຈຸດໝາຍ.ຈຶ່ງມີຄຳແນະນຳດັ່ງນີ້.

- ຫວັງວ່າປື້ມຫົວນີ້ຈະຊ່ວຍໃຫ້ຜູ້ທີ່ມີຄວາມສົນໃຈໄດ້ນຳໄປໃຊ້ປະໂຫຍດໄດ້.

## 6. ຄວາມຮູ້ບຸນຄຸນ (ຖ້າມີ)

ຜົນສຳເລັດຂອງການສຶກສາສຳຫຼວດຄວາມຫຼາກຫຼາຍຂອງຊະນິດພັນສັດປ່າຢູ່ໃນປ່າສະຫງວນແຫ່ງຊາດນ້ຳຫ້າ (ແລວເຊື່ອມຕໍ່ຕາມຊາຍແດນລາວເຂດ ນ້ຳກິ່ງ - ເຂດປ່າສະຫງວນ ຊ້ຽຍອງ ສປ ຈີນ) ໃນຄັ້ງນີ້ແມ່ນມີຄວາມສຳຄັນຫຼາຍເຊິ່ງຜົນໄດ້ຮັບເຮັດໃຫ້ຮຽນຮູ້ເຖິງປະສົບການອັນໃໝ່ໆ ແລະ ສາມາດຖອດທອນ

ບົດຮຽນ. ແລ້ວຍັງເຮັດໃຫ້ບົດລາຍງານທ້າຍການສຶກສາເຫຼົ້ມນີ້ໄດ້ຮັບຜົນສຳເລັດຕາມຄາດໝາຍ. ຜົນສຳເລັດດັ່ງກ່າວແມ່ນໄດ້ຮັບການຊ່ວຍເຫຼືອ ແລະ ຊີ້ນຳຈາກ ຄະນະກະເສດສາດ ແລະ ຊັບພະຍາ ກອນປ່າໄມ້.

ຂອບໃຈທ່ານ ຕຸ້ຍ ກິ່ງມາລາ ຫົວໜ້າຂະແໜງຄຸ້ມຄອງປ່າສະຫງວນແຫ່ງຊາດ ນ້ຳຫ້າ ແລະ ທ່ານ ທອງສະຫວັນ ປາດາວົງ ຮອງຂະແໜງຄຸ້ມຄອງປ່າສະຫງວນແຫ່ງຊາດນ້ຳຫ້າ ແລະ ທ່ານ ອູແກ້ວ ໄຊຍະທຳ ຮອງຂະແໜງຄຸ່ມຄອງປ່າສະຫງວນແຫ່ງຊາດນ້ຳຫ້າທີ່ອູ້ມຊູ ແລະ ຊຸກຍູ້ທາງດ້ານຫົວຂໍ້. ສະຖານທີ່ ແລະ ອຸປະກອນການສຶກສາຈຳນວນໜຶ່ງໃນການສຶກສາຄັ້ງນີ້ຈຶ່ງສຳເລັດ.

ຂອບໃຈທ່ານ ຫຼ້າແຝງ ບຸນວິໄລ ພະລັງງານຂະແໜ່ງຄຸ້ມຄອງປ່າສະຫງວນແຫ່ງຊາດ ນ້ຳຫ້າ ເຊິ່ງໄດ້ເປັນຜູ້ໃກ້ຊິດຕິດແທດໃນການໃຫ້ຄຳແນະນຳການຂຽນບົດຄັ້ງນີ້ຈຶ່ງສຳເລັດ.

ຂອບໃຈທ່ານ ສີທົນ ທອງສິມບົດ. ທ່ານ ສົມສັກ ເພັດມຸງຄຸນ. ທ່ານ ນາງ ອານຸລີ ຮັກວັນນະແພງ. ທ່ານ ນາງ ດາວວີ ແກ້ວດີງພັນ. ພະນັກງານ ຂະແໜ່ງຄຸ້ມຄອງປ່າສະຫງວນແຫ່ງຊາດ ນ້ຳຫ້າ ທີ່ໃຫ້ຄຳປຶກສາໃນການຂຽນບົດຄັ້ງນີ້ຈຶ່ງສຳເລັດ.

ຂອບໃຈທ່ານ ຈັນແດງ ສຸລິຍາ ແລະ ທ່ານ ແອ່ຂັນ ຄຳວົງໄຊ ແລະ ທ່ານ ລີໂກ້ ວັນ ພະນັກງານທ່ອງທ່ຽວທີ່ໄດ້ໃຫ້ຂໍ້ມູນກ່ຽວກັບການສຳຫຼວດໃນຄັ້ງນີ້ຈຶ່ງສຳເລັດ.

ຂອບໃຈທາງຄະນະ ແລະ ພາກວິຊາກໍ່ຄືອາຈານໃນຄະນະ ແລະ ອາຈານໃນພາກວິຊາທຸກຄົນທີ່ໄດ້ຊີ້ແນະສິດສອນ ໃຫ້ຂ້າພະເຈົ້າໃນການສຶກສາຕະຫຼອດ 4 ປີທີ່ເປັນນັກສຶກສາໃນສະຖາບັນແຫ່ງນີ້ ຈົນວັນນີ້ການສຶກສາໄດ້ສຳເລັດ.

ຂອບໃຈເພື່ອນຮ່ວມຫ້ອງ ແລະ ເພື່ອນສະຫາຍໃນພາກວິຊາກໍ່ຄືຄະນະ ແລະ ມະຫາວິທະຍາໄລສຸພານຸວົງທຸກຄົນທີ່ຂ້າພະເຈົ້າໄດ້ຮ່ວມຊີວິດການເປັນນັກສຶກສາໃນສະຖານບັນດຽວກັນຈົນການສຶກສາໄດ້ສຳເລັດ.

ຂໍສະແດງຄວາມຮູ້ບຸນຄຸນມາຍັງ ຄະນະບໍດີຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້. ບັນດາຄູອາຈານ. ໝູ່ເພື່ອນ ແລະ ຄອບຄົວ ທີໃຫ້ຄຳຄິດເຫັນຕ່າງໆ ຈົນປະສົບຜົນສຳເລັດໄດ້ຕາມຄາດໝາຍ.

ສຸດທ້າຍນີ້ຂໍໃຫ້ທຸກໆທ່ານຈົ່ງມີແຕ່ຄວາມສຸກກາຍສະບາຍໃຈ. ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

## 7. ເອກະສານອ້າງອີງ


- ກອງອະນຸລັກຊັບພະຍາກອນປ່າໄມ້. 1999. ປື້ມຄູ່ມືສັດບາງຊະນິດທີ່ຖືກໄພຂົ່ມຂູ່ຢູ່ໃນ ສປປ ລາວ.
- ສະພາແຫ່ງຊາດ. 2007. ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ. ເລກທີ 07/ສພຊ. ນະຄອນຫຼວງວຽງຈັນ 24/ທັນວາ.
- ສະພາແຫ່ງຊາດ. 2007. ກົດໝາຍວ່າດ້ວຍປ່າໄມ້. ເລກທີ 06/ສພຊ. ນະຄອນຫຼວງວຽງຈັນ 24/ທັນວາ.
- ສະພາແຫ່ງຊາດ. 2005. ກົດໝາຍວ່າດ້ວຍປ່າໄມ້. ເລກທີ 06/ສພຊ. ນະຄອນຫຼວງວຽງຈັນ 9/ທັນວາ .
- ສົມປອງ ປຣີຊາ. 2009. ປື້ມຄູ່ມື ຄຸ້ມຄອງສັດປ່າ. ສຳລັບການຮຽນ. ການສອນ ຫຼັກສູດປະລິນຍາຕີ ຄະນະວິທະຍາສາດປ່າໄມ້ ມະຫາວິທະຍາໄລແຫ່ງຊາດ .
- ບົວໄຂຄອນ ສະແຫວງສຶກສາ. 2003. ປື້ມຄູ່ມືຈຳແນກນົກພາກສະໜາມໃນ ສປປ ລາວ. ໂຄງການຮ່ວມື ລະຫວ່າງມະຫາວິທະຍາໄລແຫ່ງ ສປປ ລາວ ຄະນະວິທະຍາສາດທຳມະຊາດ ແລະ ອົງການອະນຸລັກນົກສາກົນ
- ປະຈຳພາກພື້ນອິນດູຈີນ ແລະ ອົງການອະນຸລັກສັດປ່າປະຈຳ ສປປ ລາວ ນະຄອນຫຼວງວຽງຈັນ
- ພາກວິຊາ ຊັບພະຍາກອນປ່າໄມ້. 2013. ປື້ມຄູ່ມືຄຸ້ມຄອງປ່າສະຫງວນ. ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້ ມະຫາວິທະຍາໄລ ສຸພານຸວົງ.
- ໂຣເບີດມາເທີ. 2000.ປື້ມສັດລ້ຽງລູກດ້ວຍນ້ຳນົມໃນປະເທດໄທແລະພູມມີພາກອິນດູຈີນ ອຳນວຍການກອງທຶນອະນຸລັກສັດປ່າໂລກສຳນັກງານແຫ່ງປະເທດໄທ.

- http: // sites. Goole.com pitchathak78. ຄວາມສໍາຄັນຂອງສັດປ່າ ຄົ້ນພົບວັນທີ 23 ທັນວາ 2015.
- www.Google earth.com. ຮູບພາບຈຸດທີ່ຕັ້ງໃນການສຶກ. ຄົ້ນພົບວັນທີ 23 ທັນວາ 2015.

ຕາຕະລາງ 1: ສະແດງຈໍານວນຊະນິດພັນສັດປ່າທີ່ພົບເຫັນໃນການຕັ້ງກ້ອງສໍາຫຼວດ.

| **ລໍາດັບ** | **ຊະນິດ** | **ຈໍານວນ** | **ຊື່ວິທະຍາສາດ** | **ຊື່ສາມັນ** | **ບັນຊີ** |
|---|---|---|---|---|---|
| 1 | ລີງ | 48 | Macaca nemestiana | Pig-taile Macaque | 2 |
| 2 | ເຫງັນ | 34 | Prionodon Linsang | Banded Linsang | 1 |
| 3 | ນົກກະຈິກ | 34 | Nitava grandis | Large Niltava | 3 |
| 4 | ໝູປ່າ | 29 | Sus scrofa Linnaeus | Wild bora or wild pig | 3 |
| 5 | ກວາງ | 19 | Cervus unicolor | Sambar deer | 1 |
| 6 | ຟານ | 19 | Muntiacus muntjac | Common | 1 |
| 7 | ໝາໃນ | 16 | Cuon aLpinus pallas | Asian wild dog | 1 |
| 8 | ເໝັ້ນ | 14 | Hystrix brachyuran | MalayanPorcupine | 2 |
| 9 | ໄກ່ຂວາ | 12 | Lophura diardi | Siamese fire back | 1 |
| 10 | ຫອນ | 6 | Atherurus macrourus | Asiantic brush | 2 |
| 12 | ກະຮອກ | 1 | Ratufa affinis Rafflea | Pale giant squirrel | 2 |
| 13 | ໝີ | 1 | Ursus thibetanus | Asiatic black bear | 1 |

ຕາຕະລາງ 2: ສະແດງຄວາມໜາແໜ້ນຂອງການນໍາໃຊ້ພື້ນທີ່.

| **ລໍາດັບ** | **ຊະນິດ** | **ຈໍານວນ** | **ໂຕ ຕໍ່ ຕາແມັດ** |
|---|---|---|---|
| 1 | ລີງ | 48 | 0.222 |
| 2 | ເຫງັນ | 34 | 0.157 |
| 3 | ນົກກະຈິກ | 34 | 0.157 |
| 4 | ໝູປ່າ | 29 | 0.134 |
| 5 | ຟານ | 19 | 0.087 |
| 6 | ກວາງ | 19 | 0.087 |
| 7 | ໝາໃນ | 16 | 0.074 |
| 8 | ເໝັ້ນ | 14 | 0.064 |
| 9 | ໄກ່ຂວາ | 12 | 0.055 |
| 10 | ຫອນ | 6 | 0.027 |
| 11 | ກະຮອກ | 1 | 0.004 |
| 12 | ໝີ | 1 | 0.004 |
| **ລວມ** | | **233** | **1.078** |

ຕາຕະລາງ 3: ສະແດງຄວາມຖີ່ຂອງການພົບເຫັນສັດປ່າໃນການຕັ້ງກ້ອງສຳຫຼວດ.

| **ລຳດັບ** | **ຊະນິດ** | **ຈຳນວນ** | **ສ່ວນຮ້ອຍ** |
|---|---|---|---|
| 1 | ລີງ | 48 | 20.6 |
| 2 | ເຫງັນ | 34 | 14.592 |
| 3 | ນົກກະຈິກ | 34 | 14.592 |
| 4 | ໝູປ່າ | 29 | 12.446 |
| 5 | ຟານ | 19 | 8.154 |
| 6 | ກວາງ | 19 | 8.154 |
| 7 | ໝາໃນ | 16 | 6.866 |
| 8 | ເໝັ້ນ | 14 | 6.008 |
| 9 | ໄກ່ຂວາ | 12 | 5.15 |
| 10 | ຫອນ | 6 | 2.575 |
| 11 | ກະຮອກ | 1 | 0.429 |
| 12 | ໝີ | 1 | 0.429 |
| **ລວມ** | | **233** | **100** |